ພອນໄຊ ທົວ
ສົມພອນໄຊ ທົວ
SOMPHONEXAY TOUR



ບໍລິສັດ ສົມ

15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

# ທ່ອງທ່ຽວເສັ້ນທາງສະແຫວງບຸນ ຕາມຮອຍສັດທາ 4 ສັງເວຊະນິຍະສະຖານ 8 ວັນ 7 ຄືນ

## ສະຖານທີ່ ປະສູດ, ຕັດສະຣູ້, ສະແດງປະຖົມມະເທດສະໜາ ແລະ ປະລິນິພານ ຂອງພຣະພຸດທະເຈົ້າທີ່ປະເທດ ອິນເດຍ ແລະ ເນປານ

### ກຳນົດການເດີນທາງ ເດືອນພະຈິກ 2566




**ມື້ທຳອິດ ຂອງການເດີນທາງ ກຸງເທບ (ສຸວັນນະພູມ) – ພຸດທະຄະຍາ**

09.30 ມ. ອອກເດີນທາງພ້ອມກັນທີ **ທ່າອາກາດສະຫຍາມນາງຊາດ ສຸວັນນະພູມ ອາຄານຜູ້ໂດຍສານລະຫວ່າງ ປະເທດ ຊັ້ນ 4**

ເຄົາເຕີ ສາຍການບິນ **THAI SMILE (WE)**ຈະພົບເຈົ້າໜ້າທີ່ຂອງບໍລິສັດ ລໍຖ້າໃຫ້ການຕ້ອນຮັບ ແລະອຳນວຍຄວາມສະດວກຕ່າງໆໃນດ້ານເອກະສານ ແລະ ສຳພາລະໃນການເດີນທາງໃຫ້ກັບທຸກໆທ່ານ

(ແນະນຳໃຫ້ໂຫລດຂອງທີ່ບໍ່ຈຳເປັນລົງຫ້ອງເຄືອງ ເພາະເຈົ້າໜ້າທີ່ອິນເດຍກວດຂ້ອນຂ້າງລະອຽດ ແນະນຳໃຫ້ຖືສະເພາະກະເປົາຖື ແລະ ຂອງມີຄ່າຂຶ້ນເຄືອງເທົ່ານັ້ນ, ສາມາດຖືໄດ້ຄົນລະ 1 ຢ່າງ ນ້ຳໜັກຕ້ອງບໍ່ເກີນ 7 ກິໂລ)



12.20 ມ. ອອກເດີນທາງສູ່ ເມືອງຄະຍາ ໂດຍສາຍການບິນໄທສະມາຍ ຖ້ຽວບິນທີ **WE327** (ໃຊ້ເວລາເດີນທາງປະມານ 3.20 ຊົ່ວໂມງ)

14.00 ມ. (ເວລາທ້ອງຖິ່ນ) ເດີນທາງເຖິງທ່າອາກາດສະໜາມບິນນານາຊາດ ເມືອງຄະຍາ (ຜ່ານພິທີການກວດຄົນເຂົ້າເມືອງ)

ນຳພາທ່ານເຂົ້າສູ່ໂຮງແຮມທີ່ພັກ ເມືອງຄະຍາ

ນຳພາທ່ານສູ່ ພຣະມະຫາໂພທິເຈດີພຸດທະຄະຍາ ເຊິ່ງສ້າງໂດຍ ພຣະເຈົ້າຫຸວິຊະກະ ໃນພຸດທະສະຕະວັດທີ 7 ໂດຍມີຮູບແບບຜະສົມປະສານເຈດີແບບພຸດ ຕັ້ງຢູ່ເໜືອປຣາງແບບຮິນດູ ຈຶ່ງເກີດເອກກະລັກສະເພາະຕົວ **ນະມັດສະການຕົ້ນພຣະສີມະຫາໂພ** ສະຖານທີ່ຕັດສະຣູ້ ເຊິ່ງປະຈຸບັນເປັນຕົ້ນທີ 4 ນະມັດສະການພຣະແທ່ນວັດສະຣະອາດ ເຊິ່ງພຣະເຈົ້າອະໂສກມະຫາລາດ ສ້າງຖວາຍໄວ້ບ່ອນສະຖານທີ່ໆເຄີຍເກີດ ລັດຕະນະບັນລັງເມືອວັນຕັດສະຣູ້, ຈາກນັ້ນນະມັດ

ການສັດຕະມະຫາສະຖານທີ່ພຣະພຸດທະອົງສະເຫວີຍວິມຸດຕິສຸກ 7 ອາທິດຫລັງຈາກຕັດສະຣູ້, ກາບຖວາຍຜ້າຫົ່ມ

ອົງພຣະພຸດທະເມດຕາ ອັນສັກສິດທີ່ປະດິດສະຖານພາຍໃນພຣະມະຫາໂພເຈດີມາແຕ່ບູຮານ, ທ່ຽວ

15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

ຊົມສະຖານທີ່ສຳຄັນ ບູຮານສະຖານ, ບູຮານວັດຖຸທີ່ອ້ອມຮອບບໍລິເວນນັ້ນເປັນຈຳນວນຫຼວງຫຼາຍ. ຫຼັງຈາກນັ້ນນຳພາທ່ານໄຫ້ວພຣະສວດມົນກ້ອງຕົ້ນ ພຣະສີມະຫາໂພສະຖານທີ່ຕັດສະຮູ້ ແລະ ນຳພາທ່ານເດີນທາງກັບສູ່ທີ່ພັກ.

ຕອນຄ່ຳ : ຮັບປະທານອາຫານຄ່ຳທີ່ໂຮງແຮມ (1) ພັກທີ່ໂຮງແຮມ ເມືອງພຸດທະຄະຍາ

**ມື້ທີ 2 ຂອງການເດີນທາງ ພຸດທະຄະຍາ – ຣາຊະພຶກ – ເຂົາຄິດສະກູດ – ວັດເວນຸວັນ – ມະຫາວິທະຍາໄລນາລັນທາ – ຫລວງພໍ່ອົງດຳ – ປັດຕະນະ.**

06.00 ມ. ຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານຂອງໂຮງແຮມ (2)

07.00 ມ. ນຳພາທ່ານເດີນທາງສູ່ ເມືອງຣາສະພຶກ ນະຄອນຫລວງແຫ່ງແຄ້ວນມາຄົດ ອັນຈະເລີນຮຸ່ງເຮືອງ ເມືອສະໄໝພຸດທະການ ປົກຄອງໂດຍພຣະເຈົ້າພິມພິສານ (ໃຊ້ເວລາເດີນທາງປະມານ 2.30 ຊົ່ວໂມງ)

09.00 ມ. ເດີນທາງຮອດເມືອງຣາຊະພຶກ ເຊິ່ງຍັງປະກົດກຳແພງເຊິ່ງອ້ອມຮອບຕາມສັນພູເຂົາທັງ 5 ເປັນປ້ອມອັນເຂັ້ມແຂງຄ້າຍຄືກຳແພງເມືອງຈີນ, ຈາກນັ້ນນຳພາທ່ານຂຶ້ນ ພູເຂົາຄິດຊະກູດ ເຊິ່ງແມ່ນສະຖານທີ່ພຣະພຸດທະອົງຖືກໃຈຫຼາຍທີ່ສຸດໃນເມືອງນີ້. ນະມັດສະການພຣະມູນຄັນທະກຸຕີພຣະພຸດທະອົງເທິງຍອດພູ, ນະມັດສະການກຸຕີພຣະອານົນ, ຖ້ຳສຸກອນຊາຕາທີ່ພຣະສາລີບຸດບັນລຸເປັນພຣະອໍລະຫັນ ແລະ ເປັນບ່ອນທີ່ ພຣະເທວະທັດກິ້ງກອ້ນຫີນໃສພຣະອົງ. ຈາກນັ້ນທ່ຽວຊົມວິວທິວທັດຂອງເມືອງຣາຊະພຶກອັນອ້ອມຮອບດ້ວຍພູທັງ 5 ຈາກເທິງສູງ.

(ການຂຶ້ນພູເຂົາຄິດຊະກູດ ເຊິ່ງເປັນການຍ່າງຂຶ້ນທີ່ສູງຊັນພໍປະມານ ໄລຍະທາງໂດຍລວມປະມານ 750 ແມັດ ທຸກທ່ານຈະຕອ້ງຍ່າງຂຶ້ນ ລົດບໍ່ສາມາດແລ່ນຂຶ້ນໄປໄດ້ ຜູ້ທີ່ແຂງແຮງສາມາດຍ່າງຂຶ້ນໄດ້ ໃຊ້ເວລາປະມານ 15-20 ນາທີ ສຳລັບທ່ານທີ່ຄິດວ່າຍາງບໍ່ໄຫວ ສາມາດຂຶ້ນໄດ້ໂດຍວິທີການນັ່ງສະຫຼ່ຽງຫາມຂຶ້ນ-ລົງໄດ້ ແຕ່ທ່ານຕອ້ງແຈ້ງລ່ວງໜ້າເພື່ອໃຫ້ເຂົາເຈົ້າໄດ້ກະກຽມໄວ້ຖ້າ ແຕ່ຄ່າໃຊ້ຈ່າຍແມ່ນບໍ່ລວມໃນລາຍການ).

ຫຼັງຈາກນັ້ນທ່ຽວຊົມວັດຊີວາກະອຳພະວັນ ຂອງພໍ່ໝໍຊີວາກະໂກມານພັດ ເຊິ່ງເຄີຍເປັນທີ່ປະຖົມພະຍາບານຂອງພຣະພຸດທະເຈົ້າ ເມື່ອຖືກພຣະເທວະທັດປອງຮ້າຍ ແລະ ຍັງຖືເປັນໂຮງພະຍາບານສິ່ງແຫ່ງທຳອິດຂອງໂລກ.





ຕອນທ່ຽງ : ຮັບປະທານອາຫານທ່ຽງທີ່ໂຮງແຮມ (3)

ຕອນບ່າຍ : ນຳພາທ່ານເດີນທາງສູ່ ວັດເວລຸວັນນະຣາມມະຫາສັງຂະຍີກາວາດ (ວັດເວລຸວັນ) ວັດແຫ່ງທຳອິດໃນພຣະພຸດທະສາດສະ ໜາ ແລະ ເປັນວັດແຫ່ງທຳອິດຂອງໂລກ ທີ່ພຣະເຈົ້າພິມພິສານສ້າງຖວາຍພຣະພຸດທະອົງ ແລະ ບ່ອນນີ້ໄດ້ເກີດເຫດການເຊິ່ງພະສົງ 1,250 ອົງ ລວ້ນແຕ່ເປັນເອຫິພິກຂຸ ມາປະຊຸມພອ້ມກັນໂດຍບໍ່ໄດ້ນັດໝາຍ ທີ່ເອີ້ນວ່າ “ມາຂະບູຊາ” ຈາກນັ້ນໄປເບິ່ງ ຕະໂປທານ ນ້ຳແຮ່ຮອ້ນ ເຊິ່ງເວົ້າກັນວ່າເປັນນ້ຳສັກສິດທີ່ໄຫຼຜ່ານນະຄອນຊັ້ນ “ໂລຫະກຸມພີ” ຊາວຮິນດູເຊື່ອວ່າເມື່ອອາບແລ້ວຈະໄດ້ບຸນສາມາດຮັກສາໂລກຮ້າຍໄດ້ ສ້າງບ່ອນອາບນ້ຳເປັນຊັ້ນໆ ຕາມຄວາມເຊື່ອເລື່ອງວັນນະ.

ຈາກນັ້ນນຳພາທ່ານເດີນທາງສູ່ ນາລັນທາ ເພື່ອເບິ່ງ ມະຫາວິທະຍາໄລນາລັນທາ, ເມືອງນາລັນທາເປັນມາຕຸພູມຂອງ 2 ພຣະອໍລະຫັນ ຄື : ພຣະສາຣີບຸດ ແລະ ພຣະໂມກຄັນລານະ ທີ່ເຄີຍເປັນສູນກາງຂອງສາສະໜາເຊນ. ນາລັນທາເປັນມະຫາວິທະຍາໄລສິ່ງທີ່ໃຫຍທີ່ສຸດ ແລະ ເກົ່າແກ່ທີ່ສຸດໃນໂລກຍຸກນັ້ນ

15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

ໂດຍເປັນສູນກາງພຸດທະສາສະໜາໃນສະໄໝບູຮານ ມີນັກສຶກສາມາຈາກຫຼາຍໆປະເທດ ລວມທັງພຣະຖັງຊຳຈັ໋ງຈາກເມືອງຈີນ, ຈາກນັ້ນນຳພາທ່ານ **ສັກກະລະບູຊາຫລວງພໍ່ອົງດຳ** ເຊິ່ງເປັນພຣະພຸດທະຮູບສັກສິດທີ່ສ້າງດວ້ຍຫີນແກຣນິກສີດຳ ເຊິ່ງສ້າງລຸ້ນດຽວກັບພຣະພຸດທະເມດຕາ ແຕ່ກ່ອນປະດິດສະຖານຢູ່ໃນມະຫາວິທະຍາໄລນາລັນທາ ຕໍ່ມາມະຫາວິທະຍາໄລຖືກໄຟເຜົາທຳລາຍ ແຕ່ພຣະອົງຍັງຄົງຮູບຮ່າງຢູ່ເກືອບຈະສົມບູນ.

ຫຼັງຈາກນັ້ນອອກເດີນທາງສູ່ **ເມືອງບັດຕະນະ** (ໃຊ້ເວລາເດີນທາງປະມານ 2.30 ຊົ່ວໂມງ)

ຕອນຄໍ່າ ຮັບປະທານອາຫານຄໍ່າທີ່ໂຮງແຮມ (4) **ພັກທີ່ໂຮງແຮມ ເມືອງບັດຕະນະ**.

**ມື້ທີ 3 ຂອງການເດີນທາງ ບັດຕະນະ - ໄວສາລີ – ກຸສິນາຣາ**

06.00 ມ. ຮັບປະທານອາຫານເຊົ້າ ຢູ່ທີ່ຫ້ອງອາຫານຂອງໂຮງແຮມ (5)

07.00 ມ. ນຳພາທ່ານອອກເດີນທາງສູ່ **ເມືອງໄວສາລີ** ເມືອງຫລວງຂອງແຄ້ວນວັດຊີ (ໃຊ້ເວລາເດີນທາງປະມານ 2.30 ຊົ່ວໂມງ) ເຊິ່ງໃນສະໄໝ ພຸດທະການ ພຣະພຸດທະອົງ ໄດ້ລົງມາຊ່ວຍເຫຼືອຊາວເມືອງໃຫ້ພົ້ນຈາກໂລກຫ່າ ເຊິ່ງເປັນທີ່ມາຂອງການສວດມົນຣັດຕະນະປະຣິຕ ແລະ ຍັງເປັນສະຖານທີ່ເຮັດສັງຄາຍະນາຄັ້ງທີ 2 ຫຼັງຈາກພຸດທະປະຣິ ນິພານແລ້ວ. ຈາກນັ້ນ**ທ່ຽວຊົມເບິ່ງບໍລິເວນຄັນທະເຈດີ** ເປັນບໍລິເວນທີ່ກະສັດລິດສະວີ ໄດ້ຈັດພິທີຕ້ອນຮັບພຣະພຸດທະອົງທີ່ໄດ້ລົງມາເມືອງ ໄວສາລີ, ພຣະເຈົ້າອະໂສກມະຫາລາດໄດ້ສ້າງເສົາຫີນພຣະເຈົ້າອະໂສກ ມີຍອດເສົາເປັນຮູບສິງໝອບຂະໜາດໃຫ່ຍ 1 ໂຕ ( ເສົານີ້ຕ່າງຈາກເສົາອື່ນໆ ທີ່ມັກມີສິງ 4 ໂຕຫັນຫຼັງຕໍາກັນ) ສະຖານທີ່ນີ້ຖືວ່າມີຄວາມສົມບູນທີ່ສຸດມີອາຍຸເກືອບ 2,300 ປີ.



ຈາກນັ້ນ**ທ່ຽວຊົມເບິ່ງສັງຂາຣາມ ແລະ ປາວານເຈດີ** ເຊິ່ງເປັນສະຖານທີ່ ພຣະພຸດທະອົງປົງອາຍຸສັງຂານເປັນຄັ້ງສຸດທ້າຍ ຕໍ່ຈາກນັ້ນອີກ 3 ເດືອນ ຈຶ່ງດັບຂັນທະປະຣິນິພານທີ່ເມືອງ ກຸສິນາຣາ ແລະ ຍັງເປັນບ່ອນທີ່ພຣະພຸດທະອົງປະທານພຸດທານຸຍາດບວດໃຫ້ພະນາງ ປັດຊາບໍດີໂຄດມີ ເປັນພະພິກສີນີຮູບທຳອິດຂອງໂລກ.

ຕອນທ່ຽງ: ເຊີນທ່ານຮັບປະທານອາຫານທ່ຽງທີ່ໂຮງແຮມ (6)

ຕອນບ່າຍ: ນຳພາທ່ານເດີນທາງສູ່ **ເມືອງກຸສິນາຣາ** ເມືອງຫລວງຂອງແຄ້ວນມັລລະ ( ໃຊ້ເວລາເດີນທາງປະມານ 5 ຊົ່ວໂມງ )

ຕອນຄໍ່າ: ເຊີນຮັບປະທານອາຫານຄໍ່າທີ່ໂຮງແຮມ (7) **ພັກຄ້າງຄືນທີ່ໂຮງແຮມ ເມືອງກຸສິນາລາ**

**ມື້ທີ 4 ຂອງການເດີນທາງ – ທ່ຽວຊົມ ປະລິນິພານເຈດີ ຫຼື ສານໂນທະຍານ – ຊົມມຸງກຸດພັນທະເຈດີ –ລຸມພິນີ (ເນປານ)**

***ກະລຸນນາກຽມໜັງສືເດີນທາງໄວ້ກັບທ່ານເອງ ເພື່ອລໍ້າກາອອກ ຈາກປະເທດອິນເດຍ ທີ່ດ່ານຊາຍແດນອິນເດຍ-ເນປານ***

06.00 ມ. ເຊີນຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານພາຍໃນໂຮງແຮມ (8)

07.00 ມ. ນຳພາບັນດາທ່ານຮ່ວມ **ນະມັດສະການທີ່ປະຣິນິພານ ຫຼື ສານວະໂນທະຍານ** ເຊິ່ງມີຕົ້ນສາລະ ປູກເພື່ອເປັນອະນຸສະຕິເຖິງພຣະພຸດທະອົງ, ນະມັດສະການສະຖານທີ່ໆ ພຣະພຸດທະອົງໄດ້ເຖິງແກ່ນິພານ ເຊິ່ງພຣະເຈົ້າອະໂສກມະຫາລາດໄດ້ສ້າງເຈດີທີ່ມີລັກສະນະເປັນບາດສູງໃຫ່ຍງໍາໜ້າລົງ ມີຍອດແຫຼມຄ້າຍຄື ເສດຖະສັດ 3 ຊັ້ນ ທີ່ເຄີຍເພລົງມາໃນປີ 2506 ປະຈຸບັນໄດ້ບູລະນະແລ້ວ ແລະ ປະຣິນິພານເຈດີນີ້ແມ່ນຢູ່ດ້ານຫຼັງຂອງປະຣິນິພານວິຫານ. ຈາກນັ້ນພາທ່ານ**ທ່ຽວຊົມ ປະຣິນິພານວິຫານ** ເຊິ່ງເປັນວິຫານທີ່ສ້າງຂຶ້ນໃນສະໄໝ ພຣະເຈົ້າອະໂສກມະຫາລາດ ແລະ ພາຍໃນວິຫານນີ້ປະດິດສະຖານພຣະພຸດທະຮູບຫີນແກະສະຫລັກປາງປະຣິນິພານ ສີມືຊ່າງຊາວມະຖຸລາ ສ້າງຂຶ້ນຈາກຫີນຊາຍແດງ ອາຍຸຫຼາຍກວ່າ 1,900 ປີ ທີ່ງົດງາມ. ໂດຍລວມແລ້ວຍັງປະກົດຊາກບູຮານສະຖານ , ກຸຕິສົງ, ເຈດີ

ບໍລິສັດ ສົມ

ພອນໄຊ ທົວ
SOMPHONEXAY TOUR

15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

ຕ່າງໆອີກຫຼວງຫຼາຍ ເຊິ່ງສະແດງເຖິງຄວາມຈະເລີນຮຸ່ງເຮືອງຂອງພຸດທະສາສະໜາໃນສະໄໝບູຮານ ນັບເປັນພັນປີກ່ອນທີ່ ພຣະພຸດທະສາສະໜາຈະເສື່ອມໂຊມໄປຈາກປະເທດອິນເດຍ ຈາກນັ້ນນຳພາທ່ານໄປ **ນະມັດສະການມະກຸດພັນທະເຈດີ** ສະຖານທີ່ຖວາຍເພີງໃສ່ສາລີລະຂອງພຣະພຸດທະເຈົ້າ ເຊິ່ງບັນດາ ມັລລະກະສັດ ໄດ້ຖວາຍສະຖານທີ່ນີ້ ອັນເຄີຍໃຊ້ເປັນບ່ອນປະກອບພິທີສວມໃສ່ມົງກຸດເພື່ອຮັບຕຳແໜ່ງກະສັດຂອງແຄ້ວນ ມັລລະ ມາແຕ່ບູຮານນະການ ເຊິ່ງປະຈຸບັນໄດ້ກາຍເປັນຊາກເຈດີຫີນແດງເກົ່າຮູບຊົງມົນລຽງເປັນຊັ້ນໆ ຂະໜາດໃຫ່ຍ, ສ້າງຂຶ້ນໃນສະໄໝ ພຣະເຈົ້າອະໂສກມະຫາລາດ ແລະ ຕັ້ງຢູ່ຫ່າງຈາກສານວະໂນທະຍານ ປະມານ 1 ກິໂລແມັດ.

ຕອນທ່ຽງ ເຊີນຮັບປະທານອາຫານທ່ຽງທີ່ໂຮງແຮມ (9)

ຕອນບ່າຍ ນຳພາທ່ານອອກເດີນທາງສູ່ **ເມືອງລຸມພິນີ** ສະຖານທີ່ປະສູດ ພຣະພຸດທະອົງ ຂະນະທີ່ຍັງດຳລົງຕຳແໜ່ງເປັນເຈົ້າຊາຍສິດທັດຖະ ເຊິ່ງໃຊ້ເວລາເດີນທາງປະມານ 4 ຊົ່ວໂມງ (ຜ່ານດ່ານຊາຍແດນໂສເນົາຣີ). ລະຫວ່າງທາງແວ່**ວັດໄທນະວະລາດຊະວັດຕະນາຮາມ** **960** ແດນສຸຂາວະດີ ສາລາພັກຂ້າງທາງຂອງຜູ້ສະແຫວງບຸນ.

ຕອນຄ່ຳ : ເຊີນທ່ານຮັບປະທານອາຫານຄ່ຳທີ່ໂຮງແຮມ (10) **ພັກທີ່ໂຮງແຮມ ເມືອງລຸມພິນີ ເນປານ**

ມື້



**ທີ 5 ຂອງການເດີນທາງ : ລຸມພິນີ (ເນປານ) ທ່ຽວຊົມ ວິຫານມາຍາເທວີ – ສາວັດຖີ**

*ກະລຸນນາກຽມຫັນງສືເດີນທາງຂອງທ່ານ ທີ່ດ່ານຊາຍແດນອິນເດຍ-ເນປານ*

ຕອນເຊົ້າ : ເຊີນທ່ານຮ່ວມຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານພາຍໃນໂຮງແຮມ (11)
ນຳພາທ່ານ**ນະມັດສະການສັງເວຊະນີຍະສະຖານແຫ່ງທີ 3 ຊາຕະສະຖານ ເຊິ່ງເປັນສະຖານທີ່ກຳເນີດຂອງພຣະພຸດທະອົງ ສວນລຸມພິນີວັນ** ໃນອະດີດເປັນອຸທະຍານ ເຊິ່ງຕັ້ງຢູ່ເຄິ່ງກາງລະຫວ່າງກຸງກະບິນລະພັດ ແລະ ກຸງເທວະຫະ ພຣະພຸດທະມານດາ ພະນາງສີລິມະຫາມາຍາ ເຊິ່ງຢູ່ກຸງກະບິນລະພັດໃນເວລາທີ່ຕັ້ງຄັນແກ່ ໄດ້ລົງຢ້ຽມຢາມສວນພ້ອມດ້ວຍຂ້າລາຊະບໍລິວານ ລະຫວ່າງການເດີນທາງເກີດປ່ວຍຈະມີກປະສູດ ຂ້າລາຊະບໍລິວານທັງຫລາຍ ຈຶ່ງຈັດບ່ອນປະສູດຖວາຍໃຫ້ຢູ່ກ້ອງຕົ້ນສາລະ ປະສູດພຣະລາຊະໂອລົດ ຄື **"ສິດທັດຖະກຸມມານ"** ສະຖານທີ່ນີ້ປະຈຸບັນມີເສົາຫີນຂອງພຣະເຈົ້າອະໂສກປະກົດຢູ່ ແລະ ຍັງມີຂໍ້ຄວາມພາສາ ພຣາໝີ ຈາລຶກໄວ້ 5 ບັນທັດຢ່າງສົມບູນ ຂຽນວ່າ ເປັນສະຖານທີ່ປະສູດຂອງອົງສົມເດັດພະສັມມາສັມພຸດທະເຈົ້າ. ຈາກນັ້ນນຳພາທ່ານ**ທ່ຽວຊົມມະຫາມາຍາເທວີວິຫານ** ສ້າງຂຶ້ນເພື່ອເປັນອະນຸສອນ ແກ່ພະນາງ ສີຣິມະຫາມາຍາ ພຣະພຸດທະມານດາ ແລະ ທ່ຽວຊົມ ພາບຫີນແກະສະຫລັກຂະ ໜາດໃຫ່ຍ ເປັນຮູບພະນາງສີຣິມະຫາມາຍາເທວີ ເຊິ່ງໃຊ້ມືເບື້ອງຂວາຈັບຫງ່າສາລະໄວ້ ເຊິ່ງປະສູດພະລາຊະກຸມານ ສິດທັດຖະ, ພະກຸມານເຊິ່ງພວມປະສູດອອກມາທາງຂວາຂອງພຣະພຸດທະມານດາທີ່ກຳລັງຢືນ ມີດອກບົວບານຮອງຮັບພະບາດ , ຮອບພະສຽນມີລັດສະໝີປະກົດຢູ່ ແລະ ໃບໜ້າແນມເບິ່ງສະນ້ຳໂບກຂໍຣະນີ ເຊິ່ງເປັນບ່ອນສົງນ້ຳຂອງພະນາງສີຣິມະຫາມາຍາເທວີ ກ່ອນຈະປະສູດ ແລະ ຫຼັງປະສູດພະກຸມານ.

ຕອນທ່ຽງ : ຮັບປະທານອາຫານທ່ຽງທີ່ໂຮງແຮມ (12)







ຕອນຄ່ຳ : ເຊີນຮັບປະທານອາຫານຄ່ຳທີ່ໂຮງແຮມ (13) **ພັກຄ້າງຄືນທີ່ໂຮງແຮມ ເມືອງສາວັດຖີ**

**ມື້ທີ 6 ຂອງການເດີນທາງ ສາວັດຖີ – ວັດເຊຕະມະຫາວິຫານ – ບ້ານທ່ານອົງຄຸລິມານ ແລະ ອະນາຖະບິນທິກະເສດຖີ – ພາຣານະສີ**

ຕອນເຊົ້າ : ຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານພາຍໃນໂຮງແຮມ (14)
ນຳພາທ່ານເດີນທາງສູ່ **ວັດເຊຕະວັນມະຫາວິຫານ** ວັດທີ່ທ່ານອານາຖະບິນທິກະເສດຖີ ສ້າງຖວາຍ ເຊີ່ງພຣະພຸດທະອົງປຈຳພັນສາເຖິງ 19 ພັນສາ ເປັນສູນກາງການເຜີຍແຜ່ພຣະພຸດທະສາສະໜາທີ່ສຳຄັນທີ່ສຸດ, ນະມັດສະການພຣະຄັນທະກຸຖິລະດູຮ້ອນ,ລະດູໜາວ ເຊີ່ງມີຂະໜາດໃຫ່ຍກວ່າຢູ່ທີ່ຍອດພູເຂົາຄິດຊະກູດ ເມືອງລາຊະພຶກປະມານ 2 ເທົ່າ, ທ່ຽວຊົມທຳມະສາລາທີ່ໃຫ່ຍທີ່ສຸດ ສັງຂະສະພາທີ່ປະຊຸມຕັດສິນອະທິກອນ, ຄະດີຄວາມຕ່າງໆ ກຸດຕິພະອໍລະຫັນ ເຊັ່ນ ພຣະໂມກຄັລລາ, ພຣະສາຣີບຸດ, ພະສີວະລີ, ພຣະອານົນ, ພຣະລາຫູ, ພຣະອົງຄຸລີມານ, ພຣະກັດສະປະ ແລະ ອາລາມຝ່າຍພຣະພິກສຸທີ່ເຄີຍຈຳພັນສາໃນຄາວພຸດທະການ. ຈາກນັ້ນ**ທ່ຽວຊົມບ້ານທ່ານອົງຄຸລີມານ ແລະ ອານາຖະບິນທິກະເສດຖີ** ຢູ່ໃນບໍລິເວນພະລາຊະວັງຂອງພະເຈົ້າປະເສນທິໂກສົນ ເບິ່ງສະຖານທີ່ທໍລະນີສູບພຣະເທວະທັດ ແລະ ນາງຈິນຈະມານະວິພາ ກາຍພະວິຫານເຊຕະວັນ ໄປປະມານ 3 ກິໂລແມັດ. ປະຈຸບັນຍັງມີເຂດ ເມືອງສາວັດຖີ ໃຫ້ເຫັນກຳແພງອອ້ມຮອບເມືອງ ແລະ ພາຍໃນເມືອງກໍຈະມີອາຄານສິ່ງປຸກສ້າງໃນອະດີດທີ່ຖືກຝັງໄວ້ພື້ນດິນເປັນຈຳນວນຫຼາຍ, ປະຈຸບັນທາງລັດຖະບານອິນເດຍ ໄດ້ຂຶ້ນທະບຽນໄວ້ເປັນສົມບັດຂອງທາງການ ແລະ ກຳລັງເຮັດການຂຸດຄົ້ນເພື່ອຫາຫຼັກຖານທາງດ້ານປະຫວັດສາດ.

ຕອນທ່ຽງ : ເຊີນຮັບປະທານອາຫານທ່ຽງທີ່ໂຮງແຮມ (15)
ຕອນບ່າຍ : ນຳພາທ່ານເດີນທາງສູ່ **ເມືອງພາຣານະສີ** ເມືອງຫລວງຂອງແຄ້ວນກາສີ ເປັນເມືອງທີ່ຈະເລີນຮຸ່ງເຮືອງຫຼາຍທີ່ສຸດແຫ່ງໜຶ່ງ ຕັ້ງແຕ່ສະໄໝກ່ອນພຸດທະການ. ນຳພາທ່ານເດີນທາງໄປສູ່ເມືອງພາຣານະສີ (ໃຊ້ເວລາເດີນທາງ 8-9 ຊົ່ວໂມງ).



ຕອນຄ່ຳ : ຮັບປະທານອາຫານຄ່ຳທີ່ໂຮງແຮມ (16) **ພັກທີ່ໂຮງແຮມ ເມືອງພາລານະສີ**

ບໍລິສັດ ສົມ

15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

**ມື້ທີ 7 ຂອງການເດີນທາງ ລ່ອງເຮືອທີ່ແມ່ນ້ຳຄົງຄາ – ສາຣະນາກ – ທ່ຽວຊົມທຳເມກຂະເຈດີ – ພິພິຕະພັນສາຣະນາກ – ພຸດທະຄະຍາ**

05.00 ມ. ນຳພາທ່ານ**ລ່ອງເຮືອທີ່ແມ່ນ້ຳຄົງຄາອາທິດອະຣຸໂນໄທ** ຍ່າງຜ່ານຕະຫຼາດຂອງເມືອງພາຣານະສີ ທີ່ເຕັມໄປດ້ວຍຜູ້ຄົນ ເບິ່ງວິຖີຊີວິດຂອງຊາວເມືອງພາຣານະສີ ເບິ່ງພິທີການອາບນ້ຳລ້າງບາບຂອງຊາວຮິນດູ, ການເຜົາສົບທີ່ທ່າມະນີກັນນິກາ ເຊິ່ງເປັນບ່ອນທີ່ຄວັນໄຟບໍ່ເຄີຍດັບ, ການເບິ່ງພະອາທິດຂຶ້ນພ້ອມກັນອາທິຖານ ຂໍຂະມາຕໍ່ເຈົ້າແມ່ຄົງຄາ ຫຼັງຈາກນັ້ນເດີນທາງກັບໂຮງແຮມທີ່ພັກ.

ຕອນເຊົ້າ ຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານພາຍໃນໂຮງແຮມ (17)

08.00 ມ. ນຳພາທ່ານເດີນທາງສູ່ **ສາຣະນາກ ປ່າອິສິບປານະມະລິຄະທາຍວັນ ສະຖານທີ່ສະແດງປະຖົມມະເທສະໜາ**

ນຳພາທ່ານ **ນະມັດສະການທັມເມກຂະເຈດີ** ສະຖານທີ່ພຣະພຸດທະອົງສະແດງປະຖົມມະເທສະໜາໂປດປັນຈາວັກຄີ ແລະ ເກີດພຣະຣັຕະນະໄຕ ເປັນຄັ້ງທຳອິດຂອງໂລກ ໃນມື້ເພັງຂຶ້ນ 15 ຄໍ່າ ເດືອນ 8 ກ່ອນ ພຸດທະສັກກະລາດ 45 ປີ ອັນເປັນວັນອາສາຫະບູຊາ, ທ່ຽວຊົມ ພະມູນຄັນທະກຸຕິ ຫຼັງທຳອິດທີ່ພຣະພຸດທະອົງຈຳພັນສາ ແລະ ເປັນພັນສາທຳອິດຫຼັງຈາກຕັດສະຣູ້ອະນຸດສຳມາສຳໂພທິຍານ, ທ່ຽວຊົມສັງຂະລາມກຸຕິສີ່ງກ່ວາງ 1,000 ຫຼັງ, ທ່ຽວຊົມສວນກວາສີງ ອັນເປັນທີ່ມາຂອງຊື່ ອິສິບຕານະມະລິຄະທາຍວັນ, ທ່ຽວຊົມ **ຫໍພິພິດຕະພັນສານນາກ** ເຊິ່ງເກັບບູຮານວັດຖຸອັນລ້ຳຄ່າ ໂດຍສະເພາະຫົວເສົາຂອງພຣະເຈົ້າອະໂສກມະຫາລາດມີຫົວສິງຢູ່ 4 ຫົວ ແລະ ທ່ຽວຊົມເບິ່ງ**ພຣະພຸດທະຮູບປາງປະຖົມມະເທດສະໜາ** ທີ່ງົດງາມເປັນເລີດ ອາຍຸຫຼາຍກວ່າ 1,400 ປີ ແລະ ຖືວ່າສວຍງາມທີ່ສຸດໃນໂລກ.

 

ຕອນທ່ຽງ ຮັບປະທານອາຫານທ່ຽງ (18)

ຕອນບ່າຍ ນຳພາທ່ານ**ເດີນທາງສູ່ເມືອງພຸດທະຄະຍາ** ໃຊ້ເວລາເດີນທາງປະມານ 7 ຊົ່ວໂມງ

ຕອນຄ່ຳ ຮັບປະທານອາຫານຄ່ຳທີ່ໂຮງແຮມ (19) **ພັກທີ່ໂຮງແຮມ ເມືອງພຸດທະຄະຍາ**.

**ມື້ທີ 8 ຂອງການເດີນທາງ ພຸດທະຄະຍາ – ກຸງເທບ (ສຸວັນນະພູມ)**

ຕອນເຊົ້າ ຮັບປະທານອາຫານເຊົ້າ ທີ່ຫ້ອງອາຫານຂອງໂຮງແຮມ (20)
ຈາກນັ້ນນຳພາທ່ານເດີນທາງສູ່ **ບ້ານນາງສຸຊາດາ** ຜູ້ທີ່ຖວາຍເຂົ້າມະທຸປາຍາດ ໃຫ້ກັບພຣະພຸດທະເຈົ້າກ່ອນທີ່ຈະຕັດສະຣູ້ ໃນພຸດທະການສະຖານທີ່ແຫ່ງນີ້ເຄີຍເປັນໝູ່ບ້ານເສນານິຄົມ ແຫ່ງຕຳບົນອຸຣຸເວລາ, ທ່ຽວຊົມບັນຍາກາດຍາມເຊົ້າແລະ ວິຖີຊີວິດຂອງຊາວອິນເດຍແຄມແມ່ນ້ຳເນຣັນຊະຣາ. ຈາກນັ້ນນຳພາທ່ານເດີນທາງສູ່ ມະຫາເຈດີພຸດທະຄະຍາ ເພື່ອກາບລາ ກ່ອນຈະເດີນທາງກັບປະເທດໄທ … ແລະ ໃຫ້ທ່ານເລືອກຊື້ສິນຄ້າຕ່າງໆໄດ້ຕາມອັດທະຍາໃສ.

ຕອນທ່ຽງ ຮັບປະທານອາຫານທ່ຽງ (21)

13.00 ມ. ນຳພາທ່ານເດີນທາງສູ່ສະໜາມບິນເມືອງຄະຍາ

15.00 ມ. ອອກເດີນທາງສູ່ ກຸງເທບ ໂດຍ **ສາຍການບິນໄທສະມາຍ ຖ້ຽວບິນທີ WE 328**

19.40 ມ. (ເວລາທ້ອງຖິ່ນ) ຄະນະເຖິງສະໜາມບິນສຸວັນນະພູມໂດຍສະຫວັດດີພາບ.



15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

| ວັນທີ | ໂປຣແກຣມ | ອາຫານ | | | ໂຮງແຮມລະດັບ 4 ດາວ ຫຼືທຽບເທົ່າ |
|---|---|---|---|---|---|
| | | ເຊົ້າ | ທ່ຽງ | ຄ່ຳ | |
| 1 | ກຸງເທບ (ສຸວັນນະພູມ) – ພຸດທະຄະຍາ - ພະມະຫາໂພທິເຈດີ - ພຸດທະຄະຍາ | | √ | √ | ໂຮງແຮມ ROYAL RESIDENCY |
| 2 | ພຸດທະຄະຍາ – ຣາດສະພຶກ – ເຂົາຄິດຊະກູດ – ວັດເວນຸວັນ – ມະຫາວິທະຍາໄລນາລັນທາ – ຫລວງພໍ່ອົງດໍາ – ປັດຕະນະ | √ | √ | √ | ໂຮງແຮມ PATLIPUTRA CONTINENTAL |
| 3 | ປັຕະນະ - ໄວສາລີ – ກຸສີນາຣາ-ຄັນທະເຈດີ-ສັງຂາຣາມ ແລະປາວາລເຈດີ | √ | √ | √ | ໂຮງແຮມ ROYAL RESIDENCY |
| 4 | ກຸສີນາຣາ – ຊົມປາະຣີນິພານເຈດີ ຫຼື ສານໂນທະຍານ – ທ່ຽວຊົມມະກຸດພັນທະເຈດີ – ລຸມພິນີ (ເນປານ) | √ | √ | √ | ໂຮງແຮມ MAURYA |
| 5 | ລຸມພິນີ (ເນປານ) ທ່ຽວຊົມ ວິຫານມາຍາເທວີ-ສາວັຕຖີ-ວິຫານມະຫາມາຍາເທວີ | √ | √ | √ | ໂຮງແຮມ PLATINUM |
| 6 | ສາວັດຖີ – ວັດເຊຕະວັນມະຫາວິຫານ – ບ້ານທ່ານອົງຄຸລີມານ ແລະ ອະນາຖະບິນທິກະເສດຖີ- ພາຣານະສີ | √ | √ | √ | ໂຮງແຮມ PRISTINE |
| 7 | ລ່ອງເຮືອແມ່ນ້ຳຄົງຄາ – ສານນາກ – ທ່ຽວຊົມທຳເມກຂະເຈດີ – ຫໍພິພິດຕະພັນສານນາກ – ພຸດທະຄະຍາ | √ | √ | √ | ໂຮງແຮມ DHAMMA GRAND |
| 8 | ພຸດທະຄະຍາ – ກຸງເທບ (ສຸວັນນະພູມ) | √ | √ | √ | |

**<u>ອັດຕາຄ່າບໍລິການນີ້ລວມ :</u>**

- ຄ່າປີ້ຍົນໄປ-ກັບ ສາຍການບິນໄທສະມາຍກຸງເທບ – ຄະຍາ – ກຸງເທບ (ນ້ຳໜັກກະເປົາໂຫລດລົງຫ້ອງເຄືອງ 30kg ຕໍ່ທ່ານ ຕໍ່ຖ້ຽວ).
- ຄ່າລົດບັດ ທີໃຊ້ໃນການເດີນທາງຢູ່ອິນເດຍ.
- ຄ່າທີພັກທຸກໆເມືອງ ແລະ ຄ່າອາຫານທຸກມື້.
- ຄ່າເຂົ້າຊົມສະຖານທີຕ່າງໆໃນທຸກໆເມືອງ (ພິພິດຕະພັນບູຮານສະຖານ ແລະ ວັດຕາມເມືອງຕ່າງໆ).
- ຄ່າວີຊາ 2 ປະເທດອິນເດຍ - ເນປານ (ວີຊາທ່ອງທ່ຽວ ອິນເດຍ 30 ວັນ / ເນປານ 15 ວັນ)
- ຄ່າປະກັນການເດີນທາງວົງເງີນ 1,000,000 ບາດ ກໍລະນີເສຍຊີວິດລະຫວ່າງການເດີນທາງ (ບໍ່ຮວມປະກັນຄວາມເສັຍຫາຍຂອງຊັບສີນ ແລະ ປະກັນສຸຂະພາບ)

**<u>ອັດຕາຄ່າບໍລິການນີ້ບໍ່ລວມ :</u>**

- **ຄ່າພາສີນ້ຳມັນ ແລະ ພາສີສະໜາມບິນ ທ່ານລະປະມານ 2,800 ບາດ ວັນທີ 18 ມິຖຸນາ 2565**
- ຄ່ານ້ຳໜັກກະເປົາເດີນທາງໂຫລດລົງຫ້ອງເຄືອງທີເກີນກວ່າທີລະບຸໄວ້ໃນກຳນົດການ
- ຄ່າເຮັດພາສະປອດ, ຄ່າເດີນທາງໃນປະເທດໄທໃນມື້ເດີນທາງໄປ ແລະ ກັບ
- ຄ່າໃຊ້ຈ່າຍສວ່ນຕົວຕ່າງໆ ເຊັ່ນ: ຄ່າຂອງຝາກ, ເງີນທຳບຸນ, ຄ່າຊົມໂທລະສັບ
- ຄ່າປະກັນຊັບສີນເສຍຫາຍຈາກການເດີນທາງ.

**<u>ໝາຍເຫດ:</u>**

- **ເນື່ອງຈາກສະຖານະການຄວາມຜັນຜວນຂອງລາຄານ້ຳມັນໂລກໃນປະຈຸບັນ ອາດຈະສົ່ງຜົນໃຫ້ຄ່າພາສີນ້ຳມັນ ແລະ ພາສີຕ່າງໆ ທີ່ຈັດເກັບໂດຍສາຍການບິນ ມີການປ່ຽນແປງໄດ້.**
- ປະເທດອິນເດຍ ເປັນປະເທດທີມີຄວາມບໍ່ແນ່ນອນສູງຈາກປັດໄຈຫຼາຍໆດ້ານ, ກຳນົດການສາມາດປັບປ່ຽນຕາມສະຖານະການ ຕາມເຫດປັດໃຈໄດ້ຕະຫຼອດເວລາ ຕາມເງືອນໄຂດ້ານຄວາມປອດໄພ ແລະ ຄວາມເໝາະສົມ ໂດຍຍຶດຖືຜົນປະໂຫຍດຂອງຄະນະເປັນຫລັກ.
- ການເດີນທາງຕາມເສັ້ນທາງສັງເວຊະນີຍະສະຖານເປັນການເດີນທາງໃນໄລຍະທາງພໍສົມຄວນ ແລະ ລະຫ່ວາງທາງບໍ່ມີຮ້ານອາຫານຕາມແບບສາກົນທີເໝາະສົມກັບຄົນໄທ ໃນບາງມື້ຫາກມີເຫດຈຳເປັນຕ້ອງຮັບປະທານອາຫານແບບແພັກກອ່ງ ຈາກວັດໄທເພືອຄວາມປອດໄພດ້ານສຸຂະອະນາໄມຂອງຄະນະ.


15-122 Ban Lakmuang, Pakse, Champasak, Lao PDR.
Tel:+85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com

- **ເງື່ອນໄຂ ແລະ ຄວາມຮັບຜິດຊອບບໍລິສັດ** ເຊິ່ງບໍ່ອາດຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂື້ນທີ່ຢູ່ເໜືອການຄວບຄຸມຂອງເຈົ້າໜ້າທີ່ບໍລິສັດ ເຊັ່ນ: ການນັດຢຸດງານ, ການກໍ່ຈາລະຈົນ, ໄພການເມືອງ, ໄພທຳມະຊາດຕ່າງໆ ເຊິ່ງອາດຈະເຮັດໃຫ້ນັກທອ່ງທ່ຽວຈາກຕ່າງປະເທດບໍ່ສາມາດເຂົ້າມາທ່ຽວໃນປະເທດໄທໄດ້ ພ້ອມທັງສາຍການບິນນັ້ນໆ ບໍ່ສາມາດບິນເຂົ້າມາປະເທດໄທຕາມເວລາທີ່ກຳນົດ ຫຼື ຕາຕະລາງເວລາການບິນຂອງສາຍການບິນທີ່ໃຊ້ໃນຖ້ຽວບິນນັ້ນໆ ບໍ່ສາມາດເດີນທາງຕາມເວລາທີ່ກຳນົດໄດ້ ຄ່າໃຊ້ຈ່າຍເພີ່ມເຕີມທີ່ເກີດຂື້ນຈາກທາງກົງ ແລະ ທາງອ້ອມ ເຊັ່ນ: ການເຈັບປ່ວຍ, ການຖືກທຳຮ້າຍ, ການສູນຫາຍ, ຄວາມລ່າຊ້າ ຫຼື ຈາກອຸປະຕິເຫດຕ່າງໆ ລວມເຖິງການຕອບປະຕິເສດການເຂົ້າ ແລະ ອອກເມືອງ ຂອງເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າເມືອງ ອັນເນື່ອງມາຈາກມີສິ່ງຜິດກົດໝາຍ ຫຼື ເອກະສານການເດີນທາງບໍ່ຖືກຕອ້ງ ຫຼື ການຖືກປະເສດໃນທຸກກໍລະນີ ທັງນີ້ທາງບໍລິສັດຈະຍຶດຖືຜົນປະໂຫຍດຂອງທ່ານເປັນອັນສຳຄັນ. ດັ່ງນັ້ນບໍລິສັດ ຈຶ່ງແຈ້ງມາເພື່ອຮັບຮູ້ໃນທ້າຍນີ້.

ບໍລິສັດ ສົມ
ພອນໄຊ ທົ
ສົມພອນໄຊ ທົວ
SOMPHONEXAY
TOUR
15-122 Ban Lakmuang, Pakse, Champasak, Lao PDR.
Tel: +85631 212 666-180, Fax: 031 212789, H/P +85620 5553-2069
Email: somphonexay@me.com


GURU TRIP HOME

หน้าหลักเว็บไซต์

ติมตามโปรโมชั่น
และเส้นทางที่น่าสนใจ

Facebook

PROMOTION TOUR

ราคาทัวร์โดนใจ
โปรโมชั่นลดราคา

กรุ๊ปเหมา สัมมนา
ดูงาน ท่องเที่ยวประจำปี

GROUP PRIVATE INTENSIVE

## ธนาคารไทยพาณิชย์

สาขา แฟชั่นไอส์แลนด์

เลขที่บัญชี :

**171-407510-7**

**บริษัท กูรูทริป จำกัด**

การจองจะเสร็จสิ้นและสมบูรณ์เมื่อยอดและบัญชีตรงตาม
ใบแจ้งยอด หรือใบแจ้งหนี้เท่านั้น และทางบริษัทต้องเป็นผู้ออก
เอกสารกำกับ เพื่อให้ลูกค้าสามารถตรวจสอบยอดได้ถูกต้อง

หมายเหตุ : หากลูกค้าทำการโอนชำระโดยไม่มี
ใบแจ้งหนี้หรือการแจ้งยอดจากเจ้าหน้าที่ที่รับผิดชอบ
ทางบริษัทขอสงวนสิทธิ์ไม่รับผิดชอบทุกกรณี

## ธนาคารกสิกรไทย

สาขา รามอินทรา109

เลขที่บัญชี :

**130-804415-3**

**บริษัท กูรูทริป จำกัด**

การจองจะเสร็จสิ้นและสมบูรณ์เมื่อยอดและบัญชีตรงตาม
ใบแจ้งยอด หรือใบแจ้งหนี้เท่านั้น และทางบริษัทต้องเป็นผู้ออก
เอกสารกำกับ เพื่อให้ลูกค้าสามารถตรวจสอบยอดได้ถูกต้อง

หมายเหตุ : หากลูกค้าทำการโอนชำระโดยไม่มี
ใบแจ้งหนี้หรือการแจ้งยอดจากเจ้าหน้าที่ที่รับผิดชอบ
ทางบริษัทขอสงวนสิทธิ์ไม่รับผิดชอบทุกกรณี

พาสปอร์ตต้องเหลืออายุการใช้งานมากกว่า 6 เดือน - ใบนัดหมายจะส่งให้ประมาณ 5-7 วัน ก่อนเดินทาง - ลูกค้ามีตั๋วภายในรบกวนแจ้งหน้าที่ก่อนทุกครั้ง ก่อนทำการจองทัวร์